ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
------ ໝໝຫຫ ------

ພັກປະຊາຊົນປະຕິວັດລາວ
ກົມການເມືອງສູນກາງພັກ ເລກທີ 01/ກມສພ

ນະຄອນຫຼວງວຽງຈັນ, ວັນທີ 03 ມັງກອນ 2018

# ຄຳສັ່ງ

## ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ

ເຖິງ: ຄະນະພັກທຸກຂັ້ນໃນທົ່ວປະເທດ

- ອີງຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ກົດລະບຽບຂອງພັກ ສະໄໝທີ X
- ອີງຕາມມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ X
- ອີງຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ

ພັກປະຊາຊົນປະຕິວັດລາວ ແມ່ນພັກກຳອຳນາດ ນຳພາທົ່ວສັງຄົມໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດຕາມຈຸດໝາຍສັງຄົມນິຍົມ. ເພື່ອຍົກສູງຄວາມສາມາດນຳພາຂອງພັກ ໃນຊຸມປີຜ່ານມາ ພັກເຮົາໄດ້ວາງຍຸດທະສາດໃນການກໍ່ສ້າງ ແລະ ປັບປຸງຕົນເອງໃນຫຼາຍດ້ານໃນນັ້ນຖືເອົາການກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານເປັນໃຈກາງ.

ຜ່ານການຈັດຕັ້ງປະຕິບັດ ເຮັດໃຫ້ໜ່ວຍພັກ ແລະ ສະມາຊິກພັກ ມີຄວາມເຕີບໃຫຍ່ຂະຫຍາຍຕົວທາງດ້ານຈຳນວນ ແລະ ຄຸນນະພາບ; ໜ່ວຍພັກ, ສະມາຊິກພັກຢູ່ຫຼາຍບ່ອນ ໄດ້ພະຍາຍາມຍົກສູງຄວາມສາມາດນຳພາຂອງຕົນສູງຂຶ້ນ. ໜ່ວຍພັກບ້ານໄດ້ຮູ້ນຳພາປະຊາຊົນພັດທະນາບ້ານຊ່ອງຂອງຕົນ ປ່ຽນແປງ ແລະ ແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນ, ໜ່ວຍພັກສຳນັກງານ-ອົງການ, ກົມກອງ ໄດ້ມີການຫັນປ່ຽນທີ່ຕັ້ງໜ້າ. ແຕ່ຍັງເຫັນວ່າ ໜ່ວຍພັກຈຳນວນບໍ່ໜ້ອຍຍັງອ່ອນ ແລະ ບໍ່ຮູ້ນຳພາ, ຄວາມເຂົ້າໃຈຕໍ່ການສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ບໍ່ທັນເປັນເອກະພາບ ແລະ ເລິກເຊິ່ງ, ຈາກນັ້ນໃນການຈັດຕັ້ງປະຕິບັດຈຶ່ງມີລັກສະນະຮູບການຫຼາຍກວ່າເນື້ອໃນ, ກົນໄກຊີ້ນຳ-ນຳພາ, ການຕິດຕາມກວດກາ, ຊຸກຍູ້ ແລະ ປະເມີນຜົນບໍ່ທັນເຂັ້ມງວດ ຈຶ່ງເກີດສະພາບ ເຊັ່ນ: ຄະນະໜ່ວຍພັກ ແລະ ສະມາຊິກພັກ ເຄື່ອນໄຫວນຳພາບໍ່ທັນຖືກຕ້ອງ, ຄົບຖ້ວນຕາມພາລະບົດບາດ, ໜ້າທີ່ຂອງຕົນຕາມທີ່ໄດ້ກຳນົດໄວ້; ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ແລະ ຄວາມເສຍສະລະເພື່ອສ່ວນລວມຂອງສະມາຊິກພັກ-ພະນັກງານຈຳນວນບໍ່ໜ້ອຍມີການເສື່ອມຖອຍ; ພະຍາດອາດຍາສິດ, ເອກະຊົນ, ຫ່າງເຫີນຈາກມະຫາຊົນ, ການສວຍໃຊ້ໜ້າທີ່ຕຳແໜ່ງ, ສໍ້ລາດບັງຫຼວງ ຫາຜົນປະໂຫຍດສ່ວນຕົວຂອງສະມາຊິກພັກ-ພະນັກງານມີລັກສະນະແຜ່ລາມ ແລະ ປະກົດໃຫ້ເຫັນຢູ່ຫຼາຍຂັ້ນ, ເຊິ່ງຍັງບໍ່ທັນໄດ້ຮັບການປັບປຸງ, ແກ້ໄຂຢ່າງເຂັ້ມງວດ, ເດັດຂາດ; ດ້ານແບບແຜນການນຳພາ ແລະ ວິທີເຮັດວຽກມີການລະເມີດຕໍ່ລະບຽບຫຼັກການຂອງພັກ ສິ່ງເຫຼົ່ານັ້ນພວມເປັນບັນຫາທ້າ

ທາຍຕໍ່ບົດບາດການນຳພາຂອງພັກ, ຖ້າພວກເຮົາບໍ່ຕັດສິນໃຈແກ້ໄຂບັນຫາດັ່ງກ່າວຢ່າງຈິງຈັງ ແທ້ ຈະເຮັດໃຫ້ບົດບາດອິດທິພົນ ແລະ ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການນຳພາຂອງພັກ ຕໍ່ລະບອບໃໝ່ນັບມື້ນັບຫຼຸດຖອຍລົງ.

ຈາກສະພາບດັ່ງກ່າວ, ຈຶ່ງເລັ່ງທວງຢ່າງຮີບດ່ວນໃຫ້ພັກເຮົາ ຕ້ອງໄດ້ປັບປຸງຕົນເອງຢ່າງແຂງແຮງ ໂດຍເລີ່ມຈາກການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແນໃສ່ຮັບປະກັນໃຫ້ພັກເຮົາສືບຕໍ່ຮັກສາໄດ້ບົດບາດ ແລະ ຄວາມສາມາດກຳອຳນາດ, ນຳພາພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດຕາມຈຸດໝາຍສັງຄົມນິຍົມ.

## ກົມການເມືອງສູນກາງພັກ ອອກຄຳສັ່ງ

## I. ຈຸດປະສົງຄາດໝາຍ

ເພື່ອສືບຕໍ່ເສີມຂະຫຍາຍມູນເຊື້ອອັນດີງາມຜົນງານທີ່ໂດດເດັ່ນ ແລະ ດ້ານດີ, ເດັດດ່ຽວປັບປຸງ, ແກ້ໄຂຈຸດອ່ອນຂໍ້ຄົງຄ້າງ ແລະ ສິ່ງທ້າທາຍທົດສອບທີ່ເປັນໄພອັນຕະລາຍຕໍ່ພັກເຮົາ ແນໃສ່ເຊີດຊູບົດບາດຄວາມສາມາດນຳພາຂອງໜ່ວຍພັກ ແລະ ຍົກສູງຄວາມເປັນແບບຢ່າງນຳໜ້າຂອງກຸ່ມແກວສະມາຊິກພັກ ຮັບປະກັນໃຫ້ພັກເຮົາມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ເພື່ອຍົກສູງຄຸນນະພາບຂອງໜ່ວຍພັກ ແລະ ສະມາຊິກພັກ ໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າດ້ວຍບາດກ້າວບຸກທະລຸ ສາມາດເປັນແກນນຳທີ່ເຂັ້ມແຂງໃນລະບົບການເມືອງຢູ່ຮາກຖານ.

ເພື່ອຮັບປະກັນເຮັດໃຫ້ການນຳພາຂອງພັກ ຕອບສະໜອງໄດ້ຄວາມເລັ່ງທວງຂອງການພັດທະນາປະເທດຊາດໃນເງື່ອນໄຂ ແລະ ສະພາບແວດລ້ອມໃໝ່ ພັກເຮົາມີຄວາມຈຳເປັນຕ້ອງກໍ່ສ້າງໜ່ວຍພັກ, ຄະນະໜ່ວຍພັກ ແລະ ສະມາຊິກພັກ ໃຫ້ມີຄວາມສາມາດນຳພາຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດວາງອອກແຕ່ລະໄລຍະໃຫ້ປະກົດຜົນເປັນຈິງ.

## II. ເນື້ອໃນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ

### 1. ດ້ານການເມືອງ

1 ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງໄດ້ຮໍ່າຮຽນ, ເຊື່ອມຊຶມແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງທົ່ວເຖິງ ແລະ ຄົບຖ້ວນ;

2 ໜ່ວຍພັກ ຕ້ອງກຳແໜ້ນສະພາວະຄວາມເປັນຈິງຂອງຮາກຖານຕົນ ເພື່ອຫັນແນວທາງ, ແຜນນະໂຍບາຍຂອງພັກ ແລະ ມະຕິຂອງຄະນະພັກຂັ້ນເທິງເປັນແຜນການຂອງໜ່ວຍພັກໃຫ້ສອດຄ່ອງກັບຄວາມຮັບຜິດຊອບ ແລະ ໜ້າທີ່ການເມືອງຂອງຕົນພ້ອມທັງຊີ້ນຳ-ນຳພາຈັດຕັ້ງປະຕິບັດຕົວຈິງໃຫ້ມີຜົນສຳເລັດ ແລະ ມີປະສິດທິຜົນສູງ;

3 ສ້າງສະມາຊິກພັກ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດທີ່ຖືກຕ້ອງ, ມີຄວາມຈົງຮັກພັກດີຕໍ່ອຸດົມການຂອງພັກ, ມີນ້ຳໃຈເສຍສະລະ, ຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຢ່າງສຸດໃຈສະແດງອອກໃນການເຄື່ອນໄຫວ ແລະ ການກະທຳຕົວຈິງຂອງສະມາຊິກພັກ.

### 2. ດ້ານແນວຄິດ

1 ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງມີຄວາມເປັນເອກະພາບສູງກັບແນວທາງປ່ຽນ

ແປງໃໝ່ຂອງພັກ, ຍຶດໝັ້ນຈຸດໝາຍສັງຄົມນິຍົມຢ່າງສະເໝີຕົ້ນສະເໝີປາຍ;

2 ຈຳແນກໄດ້ມິດ-ສັດຕູຢ່າງຈະແຈ້ງ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆທີ່ເກີດຂຶ້ນ, ເດັດດ່ຽວຕໍ່ສູ້ຕ້ານທຸກກົນອຸບາຍມ້າງເພທຳລາຍຂອງສັດຕູ ແລະ ກຸ່ມຄົນບໍ່ດີ;

3 ເປັນເຈົ້າການປົກປ້ອງແນວທາງ, ອຸດົມການຂອງພັກ, ຕອບຕ້ານສິ່ງຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນຢູ່ພາຍໃນໜ່ວຍພັກ ແລະ ໃນສັງຄົມ, ຕ້ານແນວຄິດສວຍໂອກາດ, ສວຍໃຊ້ໜ້າທີ່ຕຳແໜ່ງ, ພະຍາດອາດຍາສິດ, ເອກະລົບ, ສໍ້ລາດບັງຫຼວງ, ຫຼິ້ນກິນຟູມເຟືອຍ ແລະ ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;

4 ພາຍໃນຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງຮັກສາໄດ້ຄວາມສາມັກຄີເປັນເອກະພາບພາຍໃນການຈັດຕັ້ງພັກຢ່າງແໜ້ນແຟ້ນ, ຕ້ານແນວຄິດຫຼາຍພັກ, ຫຼາຍເຄົ້າ, ຈຸ້ມເຈື້ອພັກພວກ ແລະ ກຸ່ມກ້ອນຢູ່ໃນການຈັດຕັ້ງພັກ.

### 3. ດ້ານການຈັດຕັ້ງ

1 ຍຶດໝັ້ນ ແລະ ປະຕິບັດຢ່າງເຂັ້ມງວດ 5 ຫຼັກການ, 3 ທິດນຳໃນການກໍ່ສ້າງ ແລະ ປັບປຸງພັກ; ການດຳເນີນຊີວິດການເມືອງຂອງໜ່ວຍພັກຕ້ອງຮັບປະກັນ ແລະ ເສີມຂະຫຍາຍໄດ້ລັກສະນະນຳພາ, ລັກສະນະສຶກສາອົບຮົມ ແລະ ລັກສະນະຕໍ່ສູ້ພາຍໃນໜ່ວຍພັກ;

2 ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງມີສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງເຂັ້ມງວດ, ເປັນແບບຢ່າງທີ່ດີໃນການເຄື່ອນໄຫວ, ດຳລົງຊີວິດດ້ວຍຄວາມປອດໃສ, ບໍ່ໃຫ້ມີປະກົດການຫຍໍ້ທໍ້ຢູ່ພາຍໃນໜ່ວຍພັກ ຫຼື ຖ້າມີກໍຕ້ອງເດັດຂາດແກ້ໄຂໃຫ້ທັນການ;

3 ຄຸ້ມຄອງ, ຕີລາຄາຄຸນນະພາບຂອງສະມາຊິກພັກ ແລະ ໜ່ວຍພັກເປັນປົກກະຕິ, ປະຕິບັດການຍ້ອງຍໍສະມາຊິກພັກຜູ້ທີ່ດີເດັ່ນ; ດຳເນີນມາດຕະການທາງດ້ານວິໄນ ຕໍ່ຜູ້ລະເມີດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງເຂັ້ມງວດ;

4 ການຂະຫຍາຍມະຫາຊົນເຂົ້າພັກ ຕ້ອງຖືຄຸນນະພາບເປັນຫຼັກ ບົນພື້ນຖານປະຕິບັດໃຫ້ຖືກຕ້ອງຕາມມາດຕະຖານ, ເງື່ອນໄຂ, ບາດກ້າວ, ຂັ້ນຕອນຂອງການຂະຫຍາຍພັກທີ່ໄດ້ກຳນົດໄວ້ໃນກົດລະບຽບພັກຢ່າງເຂັ້ມງວດ;

5 ການປະກອບບຸກຄະລາກອນເຂົ້າໃນຄະນະໜ່ວຍພັກ ຕ້ອງຮັບປະກັນປະຕິບັດຖືກຕ້ອງຕາມມາດຕະຖານ, ເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງພັກຢ່າງຄົບຖ້ວນ.

### 4. ດ້ານແບບແຜນການນຳພາ

1 ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງຍຶດໝັ້ນປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ສ່ວນໜ້ອຍຂຶ້ນກັບສ່ວນຫຼາຍ, ຂັ້ນລຸ່ມປະຕິບັດຕາມຂັ້ນເທິງ;

2 ການຄົ້ນຄວ້າຕົກລົງບັນຫາສຳຄັນຍຸດທະສາດ ຕ້ອງເປັນໝູ່ຄະນະ, ເວົ້າ ແລະ ປະຕິບັດຕາມມະຕິ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ, ເຮັດວຽກມີແຜນການ, ມີໂຄງການ, ມີການຊຸກຍູ້, ຕິດຕາມ, ກວດກາ ແລະ ສະຫຼຸບປະເມີນຜົນຕາມແຜນການທີ່ໄດ້ວາງໄວ້; ປະຕິບັດລະບອບປະຊຸມ ແລະ ລາຍງານສອງແສງເປັນປົກກະຕິ;

3 ປະສານສົມທົບຢ່າງກົມກຽວລະຫວ່າງ ການນໍາພາຂອງພັກກັບການເສີມຂະຫຍາຍບົດບາດ, ໜ້າທີ່, ສິດ, ການຄຸ້ມຄອງຂອງອົງການປົກຄອງ ແລະ ຄວາມເປັນເຈົ້າການຂອງອົງການຈັດຕັ້ງມະຫາຊົນ;

4 ຍຶດໝັ້ນ ແລະ ເສີມຂະຫຍາຍແບບແຜນນໍາພາ ທີ່ເປັນມູນເຊື້ອອັນດີງາມຂອງພັກ, ແບບແຜນນໍາພາຕິດແທດຮາກຖານ, ແທດກັບຕົວຈິງ, ມີປະຊາທິປະໄຕ, ເປັນເຈົ້າການຕ້ານພະຍາດອາດຍາສິດ, ເອກະຊົນ, ສໍ້ລາດບັງຫຼວງ ແລະ ເຮັດວຽກແບບຜິວເຜີນ.

## 5. ນໍາພາປະຕິບັດໜ້າທີ່ການເມືອງ

1 ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງປະຕິບັດໜ້າທີ່ການເມືອງຂອງຕົນ ໃຫ້ມີປະສິດທິພາບສູງໃນການນໍາພາດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ວິຊາສະເພາະ, ການພັດທະນາເສດຖະກິດ, ວັດທະນະທໍາ-ສັງຄົມ, ປະຕິບັດນະໂຍບາຍຊົນເຜົ່າ ແລະ ນະໂຍບາຍການຕ່າງປະເທດຂອງພັກຢູ່ໃນຂອບເຂດການນໍາພາຂອງໜ່ວຍພັກຕົນ;

2 ນໍາພາແກ້ໄຂຄວາມທຸກຍາກຂອງປະຊາຊົນ ເພື່ອສ້າງບ້ານໃຫ້ກາຍເປັນບ້ານພັດທະນາ ເຮັດໃຫ້ຊີວິດການເປັນຢູ່ຂອງສະມາຊິກພັກ, ພະນັກງານ ແລະ ປະຊາຊົນລາວບັນດາເຜົ່າໄດ້ຮັບການປັບປຸງນັບມື້ດີຂຶ້ນ, ຄອບຄົວທຸກຍາກໄດ້ຮັບການແກ້ໄຂ;

3 ນໍາພາປັບປຸງບູລະນະອົງການປົກຄອງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງສັງຄົມອື່ນໆ ທີ່ຢູ່ໃນຂອບເຂດການນໍາພາຂອງຕົນເຄື່ອນໄຫວຕາມພາລະບົດບາດຂອງແຕ່ລະອົງການ, ສ້າງໃຫ້ອົງການເຫຼົ່ານັ້ນມີຄວາມເຂັ້ມແຂງເປັນກໍາລັງແຮງໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຢູ່ຂັ້ນຮາກຖານໃຫ້ມີຜົນສໍາເລັດ;

4 ນໍາພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຮັດໃຫ້ສໍານັກງານ-ອົງການກົມກອງ, ບ້ານມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

## III. ມາດຕະການຈັດຕັ້ງປະຕິບັດ

1. ມອບໃຫ້ຄະນະຈັດຕັ້ງສູນກາງພັກ ອອກຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດຄໍາສັ່ງຂອງກົມການເມືອງສູນກາງພັກ ສະບັບນີ້, ພ້ອມທັງຊຸກຍູ້, ການຈັດຕັ້ງປະຕິບັດຕົວຈິງໃຫ້ມີຄວາມເປັນເອກະພາບໃນທົ່ວພັກ;

2. ຄະນະພັກທຸກຂັ້ນ ຕ້ອງຄົ້ນຄວ້າ, ເຊື່ອມຊຶມ, ກໍາແໜ້ນເນື້ອໃນຄໍາສັ່ງກ່ຽວກັບການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃຫ້ເລິກເຊິ່ງ, ຫັນເປັນແຜນງານໂຄງການ, ຄາດໝາຍສູ້ຊົນຂອງອົງຄະນະພັກຂັ້ນຕົນ ພ້ອມທັງຊີ້ນໍາ-ນໍາພາຈັດຕັ້ງປະຕິບັດໃຫ້ມີຜົນສໍາເລັດ. ຖືເປັນຄວາມຮັບຜິດຊອບໂດຍກົງຂອງຄະນະພັກ ແລະ ຮັບຜິດຊອບພົນໄດ້ພົນເສຍຕໍ່ກົມການເມືອງສູນກາງພັກໃນວຽກງານດັ່ງກາວ;

3. ຄະນະໜ່ວຍພັກ ຕ້ອງສ້າງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃນແຕ່ລະປີ ພ້ອມທັງສູ້ຊົນຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບສູງ, 1 ປີ ຕ້ອງດໍາເນີນການກວດກາ, ຕີລາຄາປະເມີນຜົນ ເພື່ອຢັ້ງຢືນຄຸນນະພາບຂອງສະມາຊິກພັກ ແລະໜ່ວຍພັກ;

4. ມອບໃຫ້ລັດຖະບານຈັດແບ່ງງົບປະມານຮັບໃຊ້ເຂົ້າໃນວຽກງານດັ່ງກ່າວ ຕາມຄວາມເໝາະສົມ, ຄະນະພັກແຂວງ, ນະຄອນຫຼວງ, ຄະນະພັກກະຊວງ-ອົງການເປັນເຈົ້າການຊີ້ນຳການຂຶ້ນແຜນງົບປະມານຮັບໃຊ້ວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຂອງຂັ້ນຕົນ;

5. ຄະນະກວດກາພັກແຕ່ລະຂັ້ນ ເປັນເຈົ້າການຕິດຕາມ, ກວດກາການຈັດຕັ້ງປະຕິບັດຄຳ ຄຳສັ່ງດັ່ງກ່າວໃຫ້ເຂັ້ມງວດ ແລະ ເປັນປົກກະຕິ;

6. ຜ່ານການຈັດຕັ້ງປະຕິບັດຕົວຈິງ, ຄະນະປະຈຳພັກແຂວງ, ນະຄອນຫຼວງ ແລະ ຄະນະປະຈຳພັກກະຊວງ-ອົງການ ຕ້ອງສະຫຼຸບ, ຖອດຖອນບົດຮຽນໃນແຕ່ລະໄລຍະ ເພື່ອລາຍງານໃຫ້ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ໂດຍຜ່ານຄະນະຈັດຕັ້ງສູນກາງພັກຮັບຊາບ ແລະ ໃຫ້ການຊີ້ນຳທັນເວລາ.

ຄຳສັ່ງສະບັບນີ້ປ່ຽນແທນຂໍ້ກຳນົດຂອງກົມການເມືອງສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 13/08/2004 ວ່າດ້ວຍການປັບປຸງກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງກັບການກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ, ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕ. ກົມການເມືອງສູນກາງພັກ

ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ

ບຸນຍັງ ວໍລະຈິດ